ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 501 /ຫຄຊກລ
ນະຄອນຫລວງວຽງຈັນ, ວັນທີ 23 ມິຖຸນາ 2023.

# ໜັງສືລາຍງານ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ທີ່ນັບຖື.

**ເລື່ອງ:** ຜົນສຳເລັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕ ມາດ 02 ແລະ ແຜນວຽກຈຸດສຸມ ໄຕມາດ 03, 2023.

- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 4999/ຣສສ ,ລົງວັນທີ 09 ກັນຍາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ.
- ອີງຕາມ ແຜນການເຄື່ອນໄຫວ ປະຈຳໄຕມາດ 02,2023 ຂອງໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄຊກລ.

ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂລະເບີດບໍ່ທັນແຕກ ທີ່ ຕົກຄ້າງ ຢູ່ ສປປ ລາວ ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບຜົນສຳເລັດກອງປະຊຸມວິຊາການໂຄສະນາຜົນຮ້າຍຂອງ ລບຕ, ປະຈຳໄຕ ມາດ 02 ແລະ ແຜນວຽກຈຸດສຸມ ໄຕມາດ 03, 2023 ກອງປະຊຸມດັ່ງກ່າວໄດ້ຈັດຂຶ້ນໃນຕອນບ່າຍໂມງ ຂອງວັນທີ 20 ມິຖຸນາ 2023, ທີ່ຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ ດວງສີ ທຳມະວົງ ຮອງຫົວໜ້າຫ້ອງການ ຄຊກລ ລາຍລະອຽດມີດັ່ງລຸ່ມນີ້:

1. ຈຸດປະສົງ.
    - ເພື່ອລາຍງານການຈັດຕັ້ງປະຕິບັດ ວຽກງານ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໄຕມາດ 02, 2023 ແລະ ແຜນວຽກຈຸດສຸມ ໄຕມາດ 03 ປີ 2023;
    - ທົບທວນກອງປະຊຸມວິຊາການ ໃນໄຕມາດ 1 ທີ່ຜ່ານມາ;
    - ອັດເດດສະຖິຕິການເກີດອຸປະຕິເຫດ ຈາກ ລບຕ ໄຕມາດ ໄຕມາດ 02 ປີ 2023;
    - ການເຊື່ອມສານ ບົດບາດຍິງ-ຊາຍ ເຂົ້າໃນຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ;

- ປຶກສາຫາລື ໃສ່ ຮ່າງແບບຟອມລາຍງານວຽກງານ ໂຄສະນາ ສຶກສາຄວາມສ່ຽງໄພ ຈາກ ລບຕ;
- ປຶກສາຫາລື ແລະ ແລກປ່ຽນບົດຮຽນປະສົບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄສະນາຜົນຮ້າຍຂອງ ລບຕ.

2. **ຜູ້ເຂົ້າຮ່ວມກອງປະຊຸມ**

ກົມກິລາມວນຊົນ, ພາລະ ແລະ ສິນລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ, ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ ວັດທະນາທຳ ແລະ ການທ່ອງທ່ຽວ, ກົມຂະບວນການສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ, ໜ່ວຍງານຄຸ້ມຄອງຂໍ້ມູນ ຫ້ອງການ ຄຊກລ, ກອງກວດກູ້ລະເບີດເພື່ອມະນຸດສະທຳ 58, ວິທະຍຸກະຈາຍສຽງແຫ່ງຊາດ, ຊ່ຽວຊານ ຈາກ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ, ໂຄງການເກັບກູ້ລະເບີດແຫ່ງຊາດ, ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ (HI), ອົງການ ຮາໂລທັດອົງການເທີຣາ ຣິນາຍຊານ ປະຈຳແຂວງຊຽງຂວາງ, ອົງການແມັກ (MAG), ອົງການເອັນພີເອ ປະຈຳ ສປປ ລາວ (NPA), ອົງການສຶກສາໂລກ ປະຈຳ ສປປ ລາວ (WEL), ບໍລິສັດ ລ້ານຊ້າງມີນີໂຣນ (ຊີເພີງ).

3. **ການດຳເນີນກອງປະຊຸມ**

ກອງປະຊຸມໄດ້ດຳເນີນໄປຕາມວາລະ ໄດ້ຮັບຟັງການນຳສະເໜີ ຫົວໜ້າໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໄດ້ທົບທວນກອງປະຊຸມວິຊາການ ໄຕມາດ 01 ໃນການເຜີຍແຜ່ຜົນຂອງປະຊຸມທີ່ໄດ້ຕົກລົງ ແລະ ເອກະພາບກັນ ເປັນຕົ້ນແມ່ນ ຜົນຂອງການ ເຮັດສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍຂອງ ລບຕ (KAP Survey) ການເຄື່ອນໄຫວ ປະຈຳໄຕມາດ 2, 2023 ແລະ ແຜນວຽກຈຸດສຸມທີ່ຕ້ອງສືບຕໍ່ໃນ ໄຕມາດ 03, 2023 ເຊິ່ງຈະໄດ້ຈັດຝຶກອົບຮົມວຽກ ໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃຫ້ ພະນັກງານ ອົງການເທີຣາ ຣິນາຍຊານ, ຜູ້ປະສານງານ ຂັ້ນເມືອງ ແລະ ຂັ້ນແຂວງ ຂອງ ແຂວງຊຽງຂວາງ , ຈັດປະຊຸມຮ່ວມກັບກະຊວງສຶກສາທິການ ແລະ ກິລາ ໃນການປະສານງານການເຊື່ອມຈອດຂໍ້ມູນ, ຈັດຝຶກອົບຮົມເພື່ອສ້າງຄວາມເຂັ້ມແຂງໃຫ້ກັບຊາວໜຸ່ມອາສາສະໝັກຂັ້ນບ້ານ ຮ່ວມກັບສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ຈັດຝຶກອົບຮົມ ການຂຽນຂ່າວຜະລິດສະປອດໂຄສະນາຜົນຮ້າຍຂອງ ລບຕ ໃຫ້ບັນດາວິທະຍຸແຂວງ 10 ແຂວງ ຮ່ວມກັບກະຊວງ ຖະແຫຼງຂ່າວວັດທະນະທຳລະ ການທ່ອງທ່ຽວ. ຕໍ່ຈາກນັ້ນກອງປະຊຸມກໍ່ໄດ້ຮັບຟັງລາຍງານ ການເກີດອຸປະຕິເຫດ ຈາກໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ ໃນໄຕມາດ 02, 2023. ມີອຸປະຕິເຫດເກີດຂຶ້ນ 08 ຄັ້ງ ຜູ້ໄດ້ຮັບເຄາະຮ້າຍ ທັງໝົດ 16 ຄົນ (ຍິງ 06 ຄົນ, ຊາຍ 10 ຄົນ ) ບາດເຈັບ 14 ຄົນ ແລະ ເສຍຊີວິດ 02 ຄົນ, ຜູ້ໃຫ່ຍທັງໝົດ 02 ຄົນ (ຍິງ 01 ຄົນ, ຊາຍ 01 ຄົນ) ບາດເຈັບ 04 ຄົນ ແລະ ເສຍຊີວິດ 01 ຄົນ, ເດັກນ້ອຍທັງໝົດ 10 ຄົນ, (ຍິງ 03 ຄົນ, ຊາຍ 07 ຄົນ) ບາດເຈັບ 10 ຄົນ ແລະ ເສຍຊີວິດ 00 ຄົນ. ສາເຫດແມ່ນຍ້ອນການດັງໄຟ, ຈູດໄຮ່ ແລະ ຂຸດດິນປູກມັນຕົ້ນ ແລະ ໄດ້ຮັບຟັງການນຳສະເໜີ ຈາກ ຊ່ຽວຊານ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ ກ່ຽວກັບການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນຂະແໜງການ ແກ້ໄຂບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ປະກອບ 4 ຄຳແນະນຳຄື:

1) ນະໂຍບາຍບົດບາດຍິງ-ຊາຍ ແລະ ກົນໄກປະສານງານ;
2) ສ້າງຂີດຄວາມສາມາດໃນບົດບາດຍິງ-ຊາຍ;
3) ພັດທະນາບົດບາດຍິງ-ຊາຍ;
4) ຂະຫຍາຍນະໂຍບາຍບົດບາດຍິງ-ຊາຍໃຫ້ເທົ່າທຽມກັນ.

4. ຜົນສຳເລັດຂອງກອງປະຊຸມ:
   4.1. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ຄຳແນະນຳ ການເຜີຍແຜ່ ຜົນການເຮັດສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey) ໃນໄຕມາດ 01, 2023;
   4.2. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ປະຈຳໄຕມາດ 02 ແລະ ແຜນການວຽກຈຸດສຸມ ໄຕມາດ 3, 2023;
   4.3. ໄດ້ຮັບຮູ້ຂໍ້ມູນຈຳນວນສະຖິຕິການເກີດອຸປະຕິເຫດ ແລະ ສາເຫດທີ່ພາໃຫ້ເກີດອຸປະຕິເຫດ ຈາກ ລບຕ;
   4.4. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ກ່ຽວກັບການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນຂະແໜງການ ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ;
   4.5. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ວຽກພົ້ນເດັ່ນ ທີ່ຕິດພັນກັບວຽກໂຄສະນາ ສຶກສາຄວາມສ່ຽງໄພຈາກ ລບຕ ໄດ້ຮັບຟັງຜົນສຳເລັດຂອງບັນດາອົງການປະຕິບັດງານ ໃນໄຕມາດ 02 ແລະ ແຜນວຽກຈຸດສຸມ ໄຕມາດ 03, 2023;
   4.6. ອົງການ ເວີດອິດຸເຄເຊິນ (WEL) ໄດ້ສົມທົບກັບ ກົມການສຶກສານອກໂຮງຮຽນ ກະຊວງ ສຶກສາທິການ ແລະ ກິລາ ສຳເລັດການສ້າງຫຼັກສູດແຫ່ງຊາດ ກ່ຽວກັບລະເບີດບໍ່ທັນແຕກ ເຂົ້າໃນຂະແໜງການສຶກນອກໂຮງຮຽນ ໃນຈຳນວນ 10 ແຂວງຂອງໂຄງການ, ປຶ້ມຄູ່ມື ເຜີຍແຜ່ ກ່ຽວກັບລະເບີດບໍ່ທັນແຕກ ທີ່ຕົກຄ້າງ ສຳລັບຊັ້ນມັດທະຍົມສຶກສາ ແລະ ໃນເບື້ອງຕົ້ນແມ່ນນຳໄປທົດລອງໃນ 05 ແຂວງ: ຊຽງຂວາງ, ຄຳມ່ວນ, ສະຫັວນນະເຂດ, ເຊກອງ ແລະ ແຂວງ ສາລະວັນ;

5. ກອງປະຊຸມເອກະພາບດັ່ງນີ້:
   - ກອງປະຊຸມໄດ້ເອກະພາບແຕ່ງຕັ້ງ ຈຸດປະສານງານເຂົ້າໃນວຽກງານເຊື່ອມສານບົດບາດຍິງ-ຊາຍ ໃນຂະແໜງການໄຂບັນຫາລະເບີດບໍ່ທັນແຕກ ຂອງກຸ່ມວິຊາການໂຄສະນາ ສຶກສາຄວາມສ່ຽງໄພ ຈາກ ລບຕ ຈຳນວນ 2 ທ່ານຄື: ທ່ານ ນາງ ບົວລາ ທອງສະຫັວດ ຫົວໜ້າໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄຊກລ ທ່ານ ວິໄລສັກ ໄຊຊະນະ ຫົວໜ້າໜ່ວຍງານໂຄສະນາ ສຶກສາຄວາມສ່ຽງໄພ ຈາກ ລບຕ ຈາກ ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ (HI);
   - ເຫັນດີໃຫ້ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຄົ້ວາຄວ້າ ຢ່າງເລິກເຊິ່ງ ກັບກ່ຽວກັບຮ່າງແບບຟອມລາຍງານເຂົ້າຖານຂໍ້ມູນ ໂດຍສົມທົບກັບໜ່ວຍງານຄຸ້ມຄອງຂໍ້ມູນ ແລະ ອົງການປະຕິບັດງານ;
   - ກອງປະຊຸມໄດ້ເຫັນດີກຳນົດລາຍງານເຂົ້າຖານຂໍ້ມູນ ຜົນສຳເລັດຂອງບັນດາອົງການປະຕິບັດງານ ເພື່ອບັນລຸຕົວຊີ້ວັດທີ່ຕັ້ງໄວ້
   - ກອງປະຊຸມໄດ້ເຫັນດີໃຫ້ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຄົ້ນຄວ້າ ຊອກແຫຼ່ງງົບປະມານຈັດຝຶກອົບຮົມ ຂຽນຂ່າວ, ຜະລິດສະປອດໂຄສະນາ ຜ່ານທາງລາຍການວິທະຍຸ ເປັນພາສາຊົນເຜົ່າເພື່ອເຮັດກຸ່ມເປົ້າໝາຍໄດ້ເຂົ້າເຖິງສື່, ຂໍ້ມູນຂ່າວສານ ກ່ຽວກັບ ລະເບີດບໍ່ທັນແຕກ;
   - ເຫັນດີໃຫ້ຈັດຝຶກອົບຮົມອາສາສະໝັກຊາວໜຸ່ມຂັ້ນບ້ານ ແລະ ແຂວງ ຕາມແຜນການເຄື່ອນໄຫວ ແລະ ງົບປະມານ ທີ່ໄດ້ຮັບຮອງ ເພື່ອຂະຫຍາຍເຮັດໃຫ້ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃຫ້ຫຼາຍຂຶ້ນ ເພື່ອຄວາມຍືນຍົງ ແລະ ເປັນຂໍ້ຕໍ່ເຂົ້າໃນໂຄສະນາ ເພື່ອປູກຈິດສຳນຶກໃຫ້ນັກຮຽນ ແລະ ພໍ່ແມ່ປະຊາຊົນໄດ້ຮັບຮູ້ ເຖິງຜົນຮ້າຍຂອງ ລບຕ;

- ສືບຕໍ່ປຶກສາຫາລື ລົງເລິກ ກ່ຽວກັບບັນດາກິດຈະກຳໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃນການເອົາບັນຫາມາແລກປ່ຽນຂໍ້ມູນຮ່ວມກັນເພື່ອມາຈັດຕັ້ງປະຕິບັດ.
- ກອງປະຊຸມໄດ້ເຫັນດີໃຫ້ເພີ່ມທະວີການພົວພັນປະສານຫຼາຍຂຶ້ນ.

6. ຂໍ້ສະເໜີ

- ກອງປະຊຸມສະເໜີໃຫ້ຫ້ອງການ ຄຊກລ ຮ່າງໜັງສືແຈ້ງການໃຫ້ບັນດາອົງການປະຕິບັດງານ ກ່ຽວກັບການແຕ່ງຕັ້ງຈຸດປະສານງານ ການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ຂອງກຸ່ມວິຊາການວຽກໂຄສະນາຜົນຮ້າຍຂອງ ລບຕ;
- ສືບຕໍ່ເອົາຜົນການສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິ ຄວາມອັນຕະລາຍ ຂອງ ລບຕ (KAP Survey) ນຳໄປເຜີຍແຜ່ ແລະ ແນະນຳ ໃຫ້ໃຊ້ຊ້ອນໃນການເຮັດກຳສິກຳ ບ່ອນທີ່ມີຄວາມສ່ຽງໄພ ຈາກ ລບຕ ແລະ ວິທີຫຼີກລ້ຽງໃນການດັງໄພ ແລະ ການເຮັດປົດສະເຕີ ໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ບໍ່ຄວນໃສ່ໂຕໜັງສືຫຼາຍເກີນໄປ ອາດຈະໃຊ້ຮູບປະກອບໃສ່ ເພື່ອສະແດງໃຫ້ເຫັນເຖິງຄວາມອັນຕະລາຍ;
- ກອງປະຊຸມໄດ້ສະເໜີໃຫ້ຫ້ອງການ ຄຊກລ ຈັດກອງປະຊຸມ ເພື່ອຄົ້ນຄວ້າ, ປຶກສາຫາລື ກັບບັນດາອົງການປະຕິບັດງານ ກ່ຽວກັບຮ່າງແບບຟອມລາຍງານເຂົ້າຖານຂໍ້ມູນ ເພື່ອຕອບສະໜອງຕົວຊີ້ວັດ ທີ່ກຳນົດໄວ້ໃນແຜນພັດທະນາ ແຮງງານ ແລະ ສະຫັວດດີການສັງຄົມ 5 ປີ ຄັ້ງທີ V ໄລຍະແຕ່ ປີ 2021-2025.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ.

ປະທານກອງປະຊຸມ

ຫ້ອງການ ຄຊກລ

ດວງສີ ທຳມະວົງ

ຜູ້ລາຍງານ

ວັນສະພອນ